ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ສະມາຊິກສະພາແຫ່ງຊາດ ລົງຄະແນນສຽງຮັບຮອງເອົາ ຮ່າງກົດໝາຍວ່າດ້ວຍລະບົບການຊໍາລະ (ສະບັບປັບປຸງ) ດ້ວຍຄະແນນສຽງ 99.3%




ໃນຕອນບ່າຍຂອງວັນທີ 10 ພະຈິກ 2023 ທີ່ ສະພາແຫ່ງຊາດ. ຄະນະຮັບຜິດຊອບຮ່າງກົດໝາຍວ່າດ້ວຍລະບົບການຊໍາລະ (ສະບັບປັບປຸງ) ເຊິ່ງຕາງໜ້າໂດຍ ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຂຶ້ນນໍາສະເໜີໂດຍສັງເຂບກ່ຽວກັບຜົນການນໍາໃຊ້ ແລະ ເຫດຜົນຄວາມຈໍາເປັນທີ່ຕ້ອງໄດ້ປັບປຸງກົດໝາຍສະບັບດັ່ງກ່າວ. ໂດຍຜ່ານການນໍາໃຊ້ກົດໝາຍວ່າດ້ວຍລະບົບການຊໍາລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017 ເຂົ້າໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານລະບົບການຊໍາລະເປັນໄລຍະເວລາ 6 ປີ ເຫັນວ່າກົດໝາຍສະບັບດັ່ງກ່າວ ເປັນບ່ອນອີງຕົ້ນຕໍໃນການພັດທະນາລະບົບການຊໍາລະຂອງ ສປປ ລາວ ໃຫ້ມີການເຕີບໃຫຍ່ຂະຫຍາຍຕົວທັງດ້ານປະລິມານ ແລະ ຄຸນນະພາບ ໂດຍສະເພາະເຄື່ອງມືຊໍາລະທີ່ທັນສະໄໝເຮັດໃຫ້ການຄຸ້ມຄອງລະບົບການຊໍາລະເປັນລະບົບ, ລວມສູນ ແລະ ມີຜົນສໍາເລັດຫຼາຍດ້ານ, ແຕ່ຄຽງຄູ່ກັບດ້ານດີດັ່ງກ່າວ ເຫັນວ່າຍັງມີບາງດ້ານບໍ່ແທດເໝາະກັບສະພາບການຂະຫຍາຍຕົວຂອງວຽກງານລະບົບການຊໍາລະ ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ແລະມີຄວາມຈໍາເປັນຕ້ອງໄດ້ປັບປຸງເປັນຕົ້ນຄື:

1. ການກໍານົດຫຼັກການເຄື່ອນໄຫວ ແລະ ຄຸ້ມຄອງລະບົບການຊໍາລະ ຍັງບໍ່ທັນສອດຄ່ອງກັບຫຼັກການຂອງສາກົນວ່າດ້ວຍພື້ນຖານໂຄງລ່າງທາງດ້ານການເງິນ (Principle for Financial Market Infrastructures), ການກໍານົດຮູບແບບລະບົບການຊໍາລະ ບໍ່ສອດຄ່ອງກັບຄຸນລັກສະນະ ແລະ ການຈັດຕັ້ງປະຕິບັດ ຂອງພາກພື້ນ ແລະ ສາກົນ ເຮັດໃຫ້ພົບຄວາມຫຍຸ້ງຍາກໃນການເຊື່ອມຕໍ່ລະບົບ, ການເຊື່ອມໂຍງ ແລະ ການເຊື່ອມໃຊ້ຮ່ວມກັນ;

2. ການຂໍອະນຸຍາດດໍາເນີນທຸລະກິດ ຍັງເປັນການກໍານົດລວມ ໂດຍບໍ່ໄດ້ແຍກ ນິຕິບຸກຄົນທົ່ວໄປ ແລະ ທະນາຄານທຸລະກິດ ຫຼື ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ. ພ້ອມນີ້, ໃນການດໍາເນີນທຸລະກິດການຊໍາລະ ກໍກໍານົດ

ແຕ່ຂອດການອະນຸຍາດ ຊຶ່ງກົດໝາຍສະບັບປັດຈຸບັນ ຍັງບໍ່ທັນກຳນົດຂອດກ່ຽວກັບການໂຈະ, ການຖອນໃບອະນຸຍາດດຳເນີນທຸລະກິດ ແລະ ການຊຳລະສະສາງ ໃນເວລາສິ້ນສຸດການດຳເນີນທຸລະກິດ;

3. ຜູ້ດຳເນີນທຸລະກິດການຊຳລະ ເຮັດໜ້າທີ່ເປັນຕົວກາງການຊຳລະ ຊຶ່ງມີຄວາມສຳຄັນຕໍ່ຜູ້ຊົມໃຊ້ ແຕ່ກົດ ໝາຍຍັງບໍ່ໄດ້ກຳນົດກ່ຽວກັບລະບຽບການຮັກສາຄວາມໝັ້ນຄົງ ແລະ ການບໍລິຫານ ຫຼື ການດຳເນີນງານທີ່ດີ;

4. ຍັງບໍ່ທັນກຳນົດຖານະ ຫຼື ທີ່ຕັ້ງ ຂອງຜູ້ຄວບຄຸມ ແລະ ຜູ້ໃຫ້ບໍລິການຊຳລະ ວ່າເປັນສະຖາບັນການເງິນ ຫຼື ວິສາຫະກິດປະເພດໃດໜຶ່ງຊັດເຈນຈຶ່ງເຮັດໃຫ້ພົບຄວາມຫຍຸ້ງຍາກໃນການກຳນົດລະບົບບັນຊີ, ການລາຍງານ, ການກວດສອບ ເຮັດໃຫ້ການດຳເນີນທຸລະກິດການຊຳລະຍັງບໍ່ມີຄວາມເປັນເອກະພາບກັນ;

5. ວຽກງານລະບົບການຊຳລະ ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຢ່າງວ່ອງໄວ ເຮັດໃຫ້ມີເຄື່ອງມື, ກົນໄກ ແລະ ຜະລິດຕະພັນໃໝ່ເກີດຂຶ້ນ ໂດຍບໍ່ທັນກຳນົດຫຼັກການລວມໃນກົດໝາຍ ເພື່ອເປັນບ່ອນອີງໃນການຜັນຂະຫຍາຍ ນິຕິກຳໃຕ້ກົດໝາຍ ເປັນຕົ້ນ ການຊຳລະຂ້າມແດນ ຜ່ານເຄື່ອງມືການຊຳລະ ຊຶ່ງຕົວຈິງພຶດຕິກຳດັ່ງກ່າວໄດ້ເກີດຂຶ້ນແລ້ວ ແລະ ການພັດທະນາລະບົບເຕັກໂນໂລຊີດ້ານການຊຳລະ ກໍຄືການພັດທະນາເຄື່ອງມືການຊຳລະທີ່ທັນສະໄໝ ປອດໄພ ໂດຍສະເພາະ ທະນາຄານແຫ່ງ ສປປ ລາວ ກຳລັງເລີ່ມຄົ້ນຄວ້າ ສະກຸນເງິນດີຈີຕອນທີ່ອອກໂດຍທະນາຄານກາງ (Central Bank Digital Currency: CBDC)ເພື່ອຮັບໃຊ້ວຽກງານພັດທະນາລະບົບການຊຳລະທັງພາຍໃນ ແລະ ຂ້າມແດນ. ສະນັ້ນ, ດ້ວຍເຫດຜົນ ແລະ ຄວາມຈຳເປັນ ທີ່ກ່າວມາຂ້າງເທິງ ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງກົດໝາຍວ່າດ້ວຍລະບົບການຊຳລະ ໃຫ້ສຳເລັດໂດຍໄວ.

ຜ່ານການນຳສະເໜີຮ່າງກົດໝາຍສະບັບດັ່ງກ່າວ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໄດ້ຂຶ້ນປະກອບຄຳເຫັນໃນບາງມາດຕາ ເຊັ່ນ: ສະເໜີໃຫ້ປັບປຸງຄຳສັບທີ່ນຳໃຊ້ໃນບາງຈຸດ, ປັບປຸງເນື້ອໃນບາງມາດຕາຂອງກົດໝາຍ ແລະ ຊື່ຂອງກົດໝາຍສະບັບດັ່ງກ່າວ ເປັນຕົ້ນ. ຜ່ານການປະກອບຄຳເຫັນຕໍ່ຮ່າງກົດໝາຍສະບັບດັ່ງກ່າວຂອງ ສສຊ, ທາງຄະນະຮັບຜິດຊອບໄດ້ນຳເອົາບັນດາຄຳເຫັນໄປຄົ້ນຄວ້າພິຈາລະນາ ແລະ ປັບປຸງ ເພື່ອນຳມາສະເໜີໃຫ້ ສສຊ ໄດ້ລົງຄະແນນຮັບຮອງເອົາຮ່າງກົດໝາຍວ່າດ້ວຍລະບົບການຊຳລະ (ສະບັບປັບປຸງ) ໃນວັນທີ 20 ພະຈິກ 2023 ດ້ວຍຜົນຄະແນນ 99.3% (ມີໜ້າ 146 ທ່ານ, ເຫັນດີ 143 ທ່ານ, ບໍ່ເຫັນດີ 1 ທ່ານ ແລະ ງົດອອກສຽງ 0 ທ່ານ).










# ຂ່າວ-ພາບ: ວັນປະເສີດ ສິມບູນຂັນ.

ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ